**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

ເລກທີ 749 /ຫຄຊກລ.ຄພ.
ນະຄອນຫລວງວຽງຈັນ, ວັນທີ: 07 ກັນຍາ 2023

# ບົດລາຍງານ

**ຮຽນ:** ທ່ານຫົວໜ້າຫ້ອງການ ຄຊກລ.

**ເລື່ອງ:** ຜົນຂອງການລົງຕິດຕາມກວດກາການເຄື່ອນໄຫວຂອງ ກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ ທີ່ແຂວງ ບໍລິຄຳໄຊ.

## I. ພາກສະເໜີ

ປະຕິບັດຕາມຂໍ້ຕົກລົງຂອງຫົວໜ້າຫ້ອງການສະບັບເລກທີ 681/ຫຄຊກລ.ຄພ ລົງວັນ 22 ສິງຫາ 2023. ໃນວັນທີ 24 ຫາ 30 ສິງຫາ 2023, ໜ່ວຍງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ໄດ້ສົມທົບກັບ ກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ ທີ່ເມືອງຄຳເກີດ ແຂວງບໍລິຄຳໄຊ. ໄດ້ລົງເຄື່ອນໄຫວຊຸກຍູ້, ກວດກາຕິດຕາມການຈັດຕັ້ງປະຕິບັດວຽກງານການເກັບກູ້ ແລະ ທຳລາຍລະເບີດ ຢູ່ແຂວງ ບໍລິຄຳໄຊ.

**ຄະນະທີມງານມີລາຍຊື່ດັ່ງລຸ່ມນີ້:**

1. ທ່ານ ບຸນທະວີ ແກ້ວວິໄລ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
2. ທ່ານ ຂັນທະລີ ວຽນທະສິງ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
3. ທ່ານ ຕຸ້ຍ ໄຊຍະສານ ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
4. ທ່ານ ເຂັມພອນ ພະສີວົງມີໄຊ ແພດ/ວິຊາການຄຸ້ມຄອງຄຸນນະພາບ ຫ້ອງການ ຄຊກລ;
5. ທ່ານ ສັນຕິ ແກ້ວວິໄຊ ຂັບລົດ/ວິຊາການຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ;
6. ທ່ານ ລັດຕະນະຜາສຸກ ເກດຕະວົງ ວິຊາການ ຄຄກລ ແຂວງບໍລິຄຳໄຊ.

**ຜູ້ຕິດຕາມຈາກ ກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ:**

1. ທ່ານ ຄຳພູ ວົງຄຳໃບ ຜູ້ຊີ້ນຳການປະຕິບັດຢູ່ພາກສະໜາມ.

## II. ຈຸດປະສົງໃນການຕິດຕາມກວດກາ.

ເພື່ອຕິດຕາມກວດກາການປະຕິບັດງານແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ ຂອງນັກວິຊາການເຊັ່ນ: ການບໍລິຫານຄຸ້ມຄອງບັນຊາ, ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການສຳຫຼວດ, ເກັບກູ້, ທຳລາຍ ລບຕ ໃຫ້ມີປະສິດທິພາບ, ມີຄວາມປອດໄພ ແລະ ເພື່ອຊຸກຍູ້ປັບປຸງການປະຕິບັດງານ, ຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນປະຈຳປີ 2023, ເພື່ອຄວບຄຸມໃຫ້ເຂົ້າສູ່ລະບົບເປັນເອກະພາບກັນໃນມາດຕະຖານອັນດຽວກັນ.

- **ຈຳນວນພະນັກງານ ແລະ ຄຸນວຸດທິພະນັກງານ**

ກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ ທີ່ເມືອງຄຳເກີດ ແຂວງບໍລິຄຳໄຊ ມີພະນັກງານທັງໝົດ 31 ຄົນ ຍິງ 02 ຄົນ, ປະກອບທີມງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ 01 ທີມ, ສຳຫຼວດທາງດ້ານວິຊາການ 01 ທີມ, ກວດກູ້ມີ 02 ທີມ. ການປະກອບໂຄງຮ່າງຈັດການຕັ້ງແມ່ນຖືກຕ້ອງ ແລະ ວິຊາການເກັບກູ້ທັງໝົດທີ່ກ່າວມານັ້ນໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.

- **ກວດກາລະບົບເອກະສານ**

ກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ ມີລະບົບເອກະສານ, ການຄຸ້ມຄອງຂໍ້ມູນຂ່າວສານຢ່າງເປັນລະບົບ ເຊັ່ນ: ແມ່ນບົດລາຍງານການສຳຫຼວດຂັ້ນສອງ, ບົດລາຍງານຜົນສຳເລັດຂັ້ນສາມ, ປຶ້ມບັນທຶກປະຈຳວັນ, ແບບຟອມລາຍງານລະເບີດທີ່ບໍ່ສາມາດຊີ້ແຈງໄດ້, ແຜນຮອງຮັບອຸບັດຕິເຫດ, ໝວດເລືອດ, ອາການແພ້ຕ່າງໆຂອງພະນັກງານ ແລະ ເອກະສານອື່ນໆເຫັນວ່າຄົບຖ້ວນຕາມມາດຕະຖານການປະຕິບັດງານທີ່ໄດ້ກຳນົດໄວ້.

- **ການເຄື່ອນໄຫວຕາມແຜນປີ 2023.**

ຈະສຸມໃສ່ການຝຶກອົບຮົມຍົກລະດັບວິຊາການແຕ່ລະດ້ານໃຫ້ສູງຂຶ້ນ ແລະ ຈະສ້າງທີມປະຕິບັດງານໃໝ່ເພີ່ມຂຶ້ນ, ໃຫ້ໄດ້ 13 ທີມ ຕາມແຜນການ, ລວມຈຳນວນພົນ 120 ສະຫາຍ. ໃນນັ້ນມີ ການຝຶກອົບຮົມຫຼັກສູດພື້ນຖານການກວດກູ້ລະເບີດ ຂັ້ນ 01 ໃຫ້ໄດ້ 05 ທີມ, ຈຳນວນພົນ 65 ສະຫາຍ; ຝຶກອົບຮົມວິຊາການໂຄສະນາຄວາມສ່ຽງໄພຈາກ ລບຕ ແລະ ສຳຫຼວດບໍ່ແມ່ນວິຊາການ 04 ທີມ, ຈຳນວນພົນ 20 ສະຫາຍ; ຝຶກການຄຸ້ມຄອງຂໍ້ມູນ 04 ສະຫາຍ ແລະ ຝຶກການຄຸ້ມຄອງພາຫະນະ ແລະ ອຸປະກອນໂຄງການ 03 ສະຫາຍ.

- **ວຽກງານໂຄສະນາສຶກສາຄວາມສຽງໄພ ຈາກລະເບີດບໍ່ທັນແຕກ ແລະ ສຳຫຼວດບໍ່ແມ່ນວິຊາການ.**

ໃນປີ 2023 ນີ້ ກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ ຈະໄດ້ສືບຕໍ່ເຄື່ອນໄຫວວຽກງານໂຄສະນາສຶກສາຄວາມສຽງໄພ ຈາກລະເບີດບໍ່ທັນແຕກ ແລະ ສຳຫຼວດບໍ່ແມ່ນວິຊາການຢູ່ ແຂວງບໍລິຄຳໄຊ, ໃນຈຳນວນ 04 ຕົວເມືອງ, ມີ 57 ບ້ານ ແລະ 65 ໂຮງຮຽນ ຕາມການນຳສະເໜີຂອງອົງການປົກຄອງທ້ອງຖິ່ນ.

- **ວຽກງານ ກວດກູ້ ແລະ ທຳລາຍ ລບຕ.**

ໄດ້ກຳນົດເອົາພື້ນທີ່ໆ ຢືນຢັນວ່າອັນຕະລາຍ (CHA) ໃນໄລຍະປີ 2022 ຜ່ານມາ, ຢູ່ແຂວງ ບໍລິຄຳໄຊ, ຈຳນວນ 12 ສະໜາມ, ມີເນື້ອທີ່ທັງໝົດ 305,010 ຕາແມັດ.

- **ການລົງຕິດຕາມຢູ່ພາກສະໜາມ**

ລົງຊຸກຍູ້ຕິດຕາມສະໜາມທີ່ກຳລັງປະຕິບັດຢູ່ບ້ານນ້ຳພາວ, ເມືອງຄຳເກີດ, ທີມງານກວດກູ້ AC01 & TS01 ການຕິດຕາມແມ່ນເນັ້ນໃສ່ກວດກາດ້ານວິຊາການເກັບກູ້ ລບຕ, ການບໍລິຫານຄຸ້ມຄອງບັນຊາ, ພ້ອມກັນນັ້ນກໍ່ເປັນການສັງເກດທາງດ້ານເຕັກນິກການສຳຫຼວດ, ເກັບກູ້, ທຳລາຍ ລບຕ, ໃຫ້ມີປະສິດທິພາບ, ມີຄວາມປອດໄພ, ທີມງານຄຸ້ມຄອງຄຸນນະພາບຫ້ອງການ ຄຊກລ ຍັງໄດ້ລົງຄວບຄຸມຄຸນນະພາບສະໜາມທີ່ກວດກູ້ສຳເລັດແລ້ວຈຳນວນ 03 ສະໜາມ ເຊິ່ງມີເນື້ອທີ່ທັງໝົດ 231,960 ຕາແມັດ, ຄວບຄຸມຄຸນນະພາບຫຼາຍກວ່າ 2% ເທົ່າກັບ 5200 ຕາແມັດ, ຢູ່ເມືອງຄຳເກີດ, ເພື່ອເປັນການຢັ້ງຢືນສະໜາມດັ່ງກ່າວມີຄຸນນະພາບ, ມີຄວາມປອດໄພຕໍ່ຜູ້ນຳໃຊ້ເນື້ອທີ່ດິນ.

ການລົງກວດກາຄວບຄຸມຄຸນນະພາບຂອງທີມງານເຫັນວ່າທັງ 03 ສະໜາມແມ່ນມີຄວາມປອດໄພ ແລະ ມີຄຸນນະພາບ.

## III. ຜົນການກວດກາ

ຜ່ານການລົງຕິດຕາມກວດກາຂອງຄະນະທີມງານສັງເກດເຫັນໄດ້ດັ່ງນີ້:

- **ຈຸດດີ.**

1. ການປະຕິບັດງານຂອງ ກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ, ໄດ້ເຄື່ອນໄຫວວຽກງານພາຍໃຕ້ລະບຽບຕາມມາດຕະຖານການປະຕິບັດງານ ທີ່ສອດຄ່ອງກັບມາດຕະຖານແຫ່ງຊາດ.
2. ການຈັດຕັ້ງປະຕິບັດວຽກງານເກັບກູ້ລະເບີດຢູ່ພາກສະໜາມແມ່ນມີຄວາມປອດໄພ.
3. ຜູ້ບັນຊາສະໜາມ ແລະ ຜູ້ຊ່ວຍຫົວໜ້າທີມກໍ່ມີຄຸນວຸດທິ, ວິຊາການເກັບກູ້ກໍ່ລ້ວນແຕ່ໄດ້ຜ່ານການຝຶກອົບຮົມຈາກສູນຝຶກເກັບກູ້ລະເບີດແຫ່ງຊາດ.
4. ສະໜາມເກັບກູ້ທີ່ສຳເລັດແລ້ວແມ່ນຜ່ານຂະບວນການຄວບຄຸມຄຸນນະພາບບໍ່ພົບເສດເຫຼັກໃຫຍ່ກວ່າເຄິ່ງ ½ Blu26, ສະໜາມດັ່ງກ່າວແມ່ນມີຄວາມປອດໄພສາມາດນຳໃຊ້ເນື້ອທີ່ດິນຕາມຈຸດປະສົງ ໃນຄວາມເລິກຂອງລະບຽບການເກັບກູ້ 25 ຊັງຕີແມັດ.

5. ການນຳສະເໜີລາຍງານຕໍ່ແຂກທີ່ເຂົ້າຢ້ຽມຢາມສະໜາມ, ການສ້າງຈຸດບໍລິຫານຄຸ້ມຄອງ, ຈຸດບັນຊາ ສະຖານທີ່ປະຕິບັດທາງດ້ານການແພດ, ບ່ອນເກັບມ້ຽນອຸປະກອນເຄື່ອງກວດລະເບີດ, ບ່ອນຈອດລົດ, ຂຸມຂີ້ເຫຍື່ອ, ວິດຖ່າຍ, ບ່ອນທ້ອນໂຮມເກັບມ້ຽນເຫຼັກເສດ, ສະຖານທີ່ເກັບມ້ຽນວັດຖຸລະເບີດ ແລະ ບ່ອນເກັບມ້ຽນລະເບີດທີ່ເຄື່ອນຍ້າຍໄດ້. ສິ່ງທີ່ກ່າວຂ້າງເທິງມານັ້ນເຫັນວ່າຖືກຕ້ອງຕາມມາດຕະຖານການປະຕິບັດງານ ແລະ ສອດຄ່ອງກັບມາດຕະຖານແຫ່ງຊາດ.

- **ຂໍ້ຄົງຄ້າງ.**

1. ຫົວໜ້າທີມງານ AC01 ຍັງເຮັດບໍ່ໄດ້ດີເທົ່າທີ່ຄວນກ່ຽວກັບການລາຍງານສະພາບສະໜາມ, ການເຄື່ອນໄຫວວຽກງານຂອງຕົນ ຕໍ່ແຂກທີ່ເຂົ້າຢ້ຽມຢາມສະໜາມ ( ການນຳສະເໜີບໍ່ໄປຕາມຂັ້ນຕອນ ແລະ ບໍ່ຊັດເຈນ ) ແນະນຳໃຫ້ຫົວໜ້າທີມພະຍາຍາມປັບປຸງ ແລະ ຖອດຖອນບົດຮຽນນຳໝູ່ເພື່ອນ.
2. ການບັນທຶກຂອງແພດສະໜາມ AC01 ເຫັນວ່າອຸປະກອນການແພດຍັງຂາດເຂີນຫຼາຍລາຍການ ແລະ ບາງລາຍການກໍ່ບໍ່ຄົບຕາມຈຳນວນທີ່ລະບຸໄວ້ ໃນລາຍການບັນທຶກອຸປະກອນການແພດທີ່ບັນທຶກໄວ້ເຊັ່ນ: ອຸປະກອນຂາດເຂີນມີ ໄມ້ດາມດູກ, ເຄື່ອງດູດຂີ້ສະເຫຼດ, ເຊໂລມຫວານເຄັມ, ບັງຢືດ 6 ນີ້ວ, ຢາກັນຍຸງ, ຖົງມືແພດ, ຢາວິຕາມິນ B6, ແປ້ງໜຶບ, ຊຸດຜ່າຕັດນ້ອຍ ແລະ ອຸປະກອນທີ່ບໍ່ຄົບຕາມຈຳນວນມີ ນ້ຳເຊໂລມ NS, ບັງຢືດ 4 ນີ້ວ ແລະ ສະແລ້ງເບີ 5. ສະເໜີໃຫ້ພາກສ່ວນກ່ຽວຂ້ອງ, ຈັດສັນໃຫ້ຄົບຕາມລາຍການອຸປະການແພດທີ່ໄດ້ກຳນົດໄວ້ໃນ SOP ຂອງກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ.
3. ສະເໜີໃຫ້ໜ່ວຍງານຄຸ້ມຄອງ - ກວດກາສະໜາມ ປະຕິບັດຕາມມາດຕະຖານປະຕິບັດງານ SOP ບົດທີ6 ວ່າດ້ວຍການຄວບຄຸມ ແລະ ການຄ້ຳປະກັນຄຸນນະພາບ ແລະ ມາດຕະຖານແຫ່ງຊາດ NS ທີ່ລະບຸໄວ້ໃນບົດທີ 19 ວ່າດ້ວຍການຄຸ້ມຄອງຄຸນນະພາບ, ຖ້າກວດພົບເສດເຫຼັກ ຫຼື ສະເກັດນ້ອຍທີ່ພົບໃນຈຸດດຽວເມື່ອທ້ອນໂຮມກັນແລ້ວ ໃຫຍ່ເທົ່າກັບເຄິ່ງໜຶ່ງຂອງ ບົມບີ26 ແມ່ນບໍ່ຜ່ານການຢັ້ງຢືນຄຸນນະພາບ.
4. ສະເໜີໃຫ້ ກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ ໃຫ້ຈັດຕັ້ງໜ່ວຍງານຄວບຄຸມຄຸນນະພາບ (QC) ສຳລັບສະໜາມກວດກູ້ທີ່ສຳເລັດແລ້ວ, ກ່ອນການມອບຮັບເນື້ອທີ່ດິນ ໃຫ້ເຈົ້າຂອງດິນນຳໃຊ້.

ດັ່ງນັ້ນ, ຈິ່ງຮຽນສະເໜີມາຍັງທ່ານເພື່ອຊາບ.

ແທນ **ຫົວໜ້າຫ້ອງການ ຄຊກລ.**

ແທນ **ຫົວໜ້າໜ່ວຍງານ ຄຸ້ມຄອງຄຸນນະພາບ.**

ດວງສີ ທຳມະວົງ

ບ່ອນສົ່ງ:

ສົ່ງ ກອງກວດກູ້ລະເບີດເພື່ອມະນຸດສະທຳ 58 ກອງທັບ 1 ສະບັບ ເພື່ອລາຍງານ.

ຫ້ອງການ ຄຊກລ ເພື່ອເກັບມ້ຽນ 1 ສະບັບ.

ຫ້ອງການ ຄຄກລຂ ເກັບມ້ຽນ 1 ສະບັບ ເພື່ອລາຍງານ.

ບ້ານ ທົ່ງສ້າງນາ, ຕູ້ປນ: 7261, ນະຄອນຫຼວງ, ໂທລະສັບ: 856 21 262416, 262 386, ແຟັກ: 856 21 262 386,ອີເມວ: uxo.nra@gmail.com ເວັບໄຊທ໌: www.nra.gov.la